ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສຳເລັດກອງປະຊຸມຄະນະຊີ້ນຳໂຄງການລະດັບຊາດ ໂຄງການ ການເງິນຈຸລະພາກໃນເຂດຊົນນະບົດ-ການເຂົ້າເຖິງແຫຼ່ງທຶນຂອງຜູ້ທຸກຍາກ




ກອງປະຊຸມຄະນະຊີ້ນຳໂຄງການລະດັບຊາດໂຄງການການເງິນຈຸລະພາກໃນເຂດຊົນນະບົດ-ການເຂົ້າເຖິງແຫຼ່ງທຶນຂອງຜູ້ທຸກຍາກ (MRA-AFP) ໄດ້ດຳເນີນມາເປັນເວລາເຄິ່ງວັນ ແລະ ສຳເລັດລົງໃນຕອນແລງຂອງວັນທີ 26 ກຸມພາ 2018, ທີ່ນະຄອນຫຼວງວຽງຈັນ ພາຍໃຕ້ການເປັນປະທານຂອງທ່ານ ສອນໄຊ ສິດພະໄຊ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ; ພ້ອມນີ້ຍັງມີທ່ານ ເຍນສປີເຕີ ຣຸດເກີນແຮມ ເອກອັກຄະລັດຖະທູດສະຫະພັນ ເຢຍລະມັນ ປະຈຳ ສປປ ລາວ; **ທ່ານ ແອນເດຣຍ ຊູບຣຸກ** ອຸປະທູດອົດສະຕຼາລີ ປະຈຳ ສປປ ລາວ, ບັນດາທ່ານຮອງເຈົ້າແຂວງ, ເຈົ້າເມືອງ, ຜູ້ຕາງໜ້າຈາກຫ້ອງການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ, ສູນກາງສະຫະພັນແມ່ຍິງລາວ, ສູນກາງແນວລາວສ້າງຊາດ, ຄະນະກົມ, ຫົວໜ້າສາຂາ ທຫລ, ຕາງໜ້າອຳນາດການປົກຄອງທ້ອງຖິ່ນ ແລະ ບັນດາຜູ້ຕາງໜ້າຈາກອົງການຄູ່ຮ່ວມພັດທະນາ.



ກອງປະຊຸມຄະນະຊີ້ນຳໂຄງການລະດັບຊາດໂຄງການການເງິນຈຸລະພາກໃນເຂດຊົນນະບົດ-ການເຂົ້າເຖິງແຫຼ່ງທຶນຂອງຜູ້ທຸກຍາກ (AFP) ປະຈຳປີ 2017 ໃນຄັ້ງນີ້ຍັງຮັບຟັງການສະຫຼຸບຜົນການຈັດຕັ້ງປະຕິບັດແຜນງານ, ບັນຫາ ແລະ ສິ່ງທ້າທາຍໃນການຈັດຕັ້ງປະຕິບັດໂຄງການການເງິນຈຸລະພາກໃນຂົງເຂດຊົນນະບົດ-ການເຂົ້າເຖິງແຫຼ່ງທຶນຂອງຜູ້ທຸກຍາກ (MRA-AFP) ໄລຍະທີ III ສົກປີ 2015-2017 ແລະ ປຶກສາຫາລືກ່ຽວກັບການຈັດຕັ້ງປະຕິບັດແຜນງານຂອງໂຄງການໄລຍະທີ IV ສົກປີ 2017-2018. ພ້ອມດຽວກັນຍັງໄດ້ມີການປະກອບຄຳເຫັນຈາກທ່ານເອກອັກຄະລັດຖະທູດເຢຍລະມັນ, ຈາກທ່ານອຸປະທູດອິດສະຕູາລີ ແລະ ທ່ານ ພັນທະບູນ ໄຊຍະເພັດ ໄຊຍະເພັດ ຮອງຫົວໜ້າກົມຄຸ້ມຄອງສະຖາບັນການເງິນ, ຮອງຫົວໜ້າໂຄງການ AFP ໄດ້ສະເໜີພາບລວມຜົນສຳເລັດຂອງການປະຕິບັດໂຄງການ AFP ໄລຍະ3, ສົກປີ 2015-2017; ໃນຂະນະດຽວກັນ ກໍມີການປະກອບຄຳເຫັນຈາກທ່ານຮອງເຈົ້າແຂວງຫຼວງນ້ຳທາ; ແຂວງໄຊຍະບູລີ ແລະ ທ່ານຮອງເຈົ້າແຂວງສະຫວັນນະເຂດ; ຕິດຕາມມາດ້ວຍການປະກອບຄຳເຫັນຂອງຫົວໜ້າພະແນກແຜນການແຂວງອັດຕະປື; ຫົວໜ້າພະແນກແຜນການແຂວງສາລະວັນ; ຫົວໜ້າພະແນກພັດທະນາຊົນນະບົດແຂວງຈຳປາສັກ; ຈາກນັ້ນ ກອງປະຊຸມຍັງໄດ້ຜ່ານຮ່າງແຜນດຳເນີນງານສຳລັບແຜນໄລຍະ 4 ປະຈຳປີ 2017-2018 ຕື່ມອີກ.

ທ່ານ ສອນໄຊ ສິດພະໄຊ, ຮອງຜູ້ວ່າການ ທຫລ ຍັງຮຽກຮ້ອງໃຫ້ທຸກພາກສ່ວນກໍ່ຄືໂຄງການ, ສະຖາບັນການເງິນ ແລະ ອົງການຈັດຕັ້ງຂັ້ນສູນກາງ ແລະ ທ້ອງຖິ່ນຕ້ອງໄດ້ຮ່ວມມືກັນ, ມີການປະສານສົມທົບກັນເພື່ອເຮັດໃຫ້ແຜນງານໂຄງການນີ້ສຳເລັດຜົນ, ພ້ອມດຽວກັນນີ້ກໍ່ຕອ້ງປະຕິບັດໃຫ້ຖືກຕ້ອງ ແລະ ສອດຄ່ອງກັບລະບຽບກົດໝາຍ, ແນວທາງນະໂຍບາຍຂອງພັກ ແລະ ລັດຖະບານວາງອອກ; ທັງໃຫ້ມີຄວາມເປັນເອກະພາບໄປລວງດຽວກັນ ແລະ ທັງມີປະສິດທິຜົນສູງ ເຊິ່ງບັນຫາທຳອິດແມ່ນໃຫ້ຄະນະຮັບຜິດຊອບໂຄງການຕ້ອງໄດ້ເອົາໃຈໃສ່ໃກ້ຊິດຕິດແທດໃນວຽກງານກວດກາຕິດຕາມບັນດາຂະແໜງການທີ່ໄດ້ຂຶ້ນໄວ້ໃຫ້ໄດ້ຮັບປະສິດທິພາບສູງສຸດ; ສະເໜີໃຫ້ອຳນາດການປົກປ້ອງທ້ອງຖິ່ນສືບຕໍ່ຊ່ວຍຊຸກຍູ້ສົ່ງເສີມໃກ້ຊິດຕິດແທດຊີ້ນຳວຽກງານສະ

ຖາບັນການເງິນຈຸລະພາກເວົ້າລວມ, ເວົ້າສະເພາະບັນດາທະນາຄານບ້ານ ທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນໃຫ້ມີຄວາມເຂັ້ມແຂງ ແລະ ຍືນຍົງ, ບັນຫາສຸດທ້າຍຕໍ່ກັບເບື້ອງສະຖາບັນການເງິນທີ່ມີໜ້າທີ່ເປັນຜູ້ສະໜອງຄວາມຮູ້ດ້ານວິຊາສະເພາະໃຫ້ບັນດາທະນາຄານບ້ານກໍ່ໃຫ້ມີຄວາມຮັບຜິດຊອບສູງໃນການປະຕິບັດພາລະບົດບາດຂອງຕົນເອງເປັນຢ່າງດີ.




ຜ່ານການຈັດຕັ້ງປະຕິບັດແຜນງານໂຄງການ AFP ໃນໄລຍະຜ່ານມາ ແມ່ນໄດ້ຮັບຜົນສຳເລັດຕາມລະດັບຄາດໝາຍເປັນຢ່າງດີ ເຫັນໄດ້ຈາກການເພີ່ມຂຶ້ນຂອງທະນາຄານບ້ານ, ຈຳນວນສະມາຊິກທີ່ມາໃຊ້ບໍລິການ ແລະ ½ ຂອງສະຖາບັນການເງິນທັງໝົດທີ່ໂຄງການສະໜັບສະໜູນກໍໃກ້ຈະສາມາດກຸ້ມຕົນເອງໄດ້ແລ້ວ. ນອກນີ້ວຽກງານໜຶ່ງທີ່ມີຄວາມສຳຄັນກໍຄື ວຽກງານການໃຫ້ຄວາມຮູ້ທາງດ້ານການເງິນ ຫຼື ການປະຊາສຶກສາທາງດ້ານການເງິນ ທີ່ໃນປັດຈຸບັນທາງໂຄງການກຳລັງເຄື່ອນໄຫວໃຫ້ຄວາມຮູ້ແກ່ປະຊາຊົນໃນແຕ່ລະແຂວງເປົ້າໝາຍ ແຕ່ໃນອະນາຄົດຕ້ອງໄດ້ໃຫ້ຄວາມຮູ້ໃຫ້ແກ່ປະຊາຊົນໃນທົ່ວສັງຄົມ ເພື່ອຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ລັດຖະບານໃນການຮູ້ຈັກປະຢັດມັດທະຍັດ ແລະ ນຳໃຊ້ເງິນໃຫ້ເກີດປະສິດທິຜົນສູງສຸດຍິ່ງໆຂຶ້ນ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ.**

## ເງິນກີບຄືກຽດສັກສີຂອງຊາດ ໃຊ້ຈ່າຍສະຫຼາດ ຊາດພັດທະນາ